ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງໄຊຍະບູລີ

ເລກທີ 559/ຈຂ.ຊຍ

ໄຊຍະບູລີ, ວັນທີ 01/6/2020

ຂໍ້ຕົກລົງ

ວ່າດ້ວຍ ກອງທຶນສົ່ງເສີມກະສິກຳຍືນຍົງ

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງສປປລາວ, ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ພາກ III, ໝວດທີ 4, ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ກົດໝາຍ ວ່າດ້ວຍ ກະສິກຳ ເລກທີ 01/98.ສພຊ, ລົງວັນທີ 10 ຕຸລາ 1998, ໝວດທີ IV ການສົ່ງເສີມການຜະລິດ ກະສິກຳ, ມາດຕາ 50 ທຶນ ແລະ ກອງທຶນສົ່ງເສີມ;
- ອີງຕາມ ມະຕິຂອງກອງປະຊຸມ ສະພາປະຊາຊົນແຂວງໄຊຍະບູລີ ກ່ຽວກັບການຮັບຮອງເອົາ ຂໍ້ຕົກລົງ ວ່າດ້ວຍ ກອງທຶນສົ່ງເສີມກະສິກຳຍືນຍົງ, ສະບັບເລກທີ 034./ສພຂ.ຊຍ, ລົງວັນທີ 31 ມັງກອນ 2020.

ເຈົ້າແຂວງໄຊຍະບູລີຕົກລົງ

ໝວດທີ 1
ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ກ່ຽວກັບ ການຄຸ້ມຄອງ ກອງທຶນສົ່ງເສີມກະສິກຳຍືນຍົງ. ແນ່ໃສ ການລະດົມ, ຂົນຂວາຍ ແລະ ສະສົມທຶນ, ເພື່ອຊຸກຍູ້ສົ່ງເສີມ ການຜະລິດກະສິກຳເປັນສິນຄ້າ ຂອງ ບັນດາ ຊາວກະສິກອນ, ກຸ່ມການຜະລິດ, ສະຫະກອນ, ສະມາຄົມ ແລະ ນັກທຸລະກິດຜູ້ປະກອບການ ດ້ານກະສິກຳ ໃຫ້ມີຄວາມຍືນຍົງ.

ມາດຕາ 2 ນິຍາມ

ກອງທຶນສົ່ງເສີມກະສິກຳຍືນຍົງ ແມ່ນກອງທຶນລວມໝູ່ ການຈັດຕັ້ງ ພາກລັດ ແລະ ເອກະຊົນ ທີ່ສ້າງຂຶ້ນເພື່ອສະສົມທຶນ, ຈາກການປະກອບສ່ວນຕາມກຳນົດ, ຄວາມສະໝັກໃຈ ຂອງ ຊາວກະສິກອນ, ກຸ່ມການຜະລິດ, ສະຫະກອນ, ສະມາຄົມ ແລະ ນັກທຸລະກິດ ຜູ້ປະກອບການ ດ້ານກະສິກຳຢູ່ພາຍໃນແຂວງໄຊຍະບູລີ, ເພື່ອຊຸກຍູ້ສົ່ງເສີມການຜະລິດກະສິກຳເປັນສິນຄ້າໃຫ້ຫຼາຍ ແລະ ມີຄວາມຍືນຍົງ.

ມາດຕາ 3 ອະທິບາຍຄໍາສັບ

1. ກອງທຶນສົ່ງເສີມ ກະສິກໍາ ຍືນຍົງ ຂຽນຫຍໍ້ "ກສຍ";
2. ກະສິກໍາ ຍືນຍົງ ໝາຍວ່າ: ມີການຜະລິດ ແລະ ການປັບປຸງເຕັກນິກ ຕໍ່ເນື່ອງ, ບໍ່ມີຜົນກະທົບດ້ານລົບ ຕໍ່ຜູ້ຜະລິດ ແລະ ຜູ້ບໍລິໂພກ, ບໍ່ມີຜົນກະທົບຕໍ່ ທໍາມະຊາດ (ດິນ, ແຫຼ່ງນໍ້າ ແລະ ອາກາດ)
3. ການຄຸ້ມຄອງ-ບໍລິຫານ: ໝາຍເຖິງ ການຄຸ້ມຄອງ, ການຕອບສະໜອງ, ການປະສານງານ, ການ ບໍລິຫານວຽກງານ ພາຍໃນ "ກສຍ";
4. ຜູ້ມີເງື່ອນໄຂນໍາໃຊ້ທຶນ: ໝາຍເຖິງ ຊາວກະສິກອນ, ກຸ່ມການຜະລິດ, ສະຫະກອນ ແລະ ນັກທຸລະກິດ ຜູ້ປະກອບການ ດ້ານກະສິກໍາ, ການຈັດຕັ້ງພາກລັດ;
5. ກິດຈະກໍາສົ່ງເສີມການຜະລິດ: ການອົບຮົມທາງດ້ານເຕັກນິກ, ການບໍລິຫານ, ການໃຫ້ເງິນກູ້ຢືມ, ການຄໍ້າປະກັນລາຄາ ການຊ່ວຍເຫຼືອສູກເສີນ;
6. ກຸ່ມ ໝາຍເຖິງ ການລວມຕົວຂອງຊາວກະສິກອນ ດ້ວຍຄວາມສະໝັກໃຈ ຈັດຕັ້ງຂຶ້ນ ເພື່ອສ້າງກິດຈະ ກໍາຮ່ວມກັນ ດ້ານ ການປູກ, ການລ້ຽງ, ການປະມົງ, ການປຸງແຕ່ງ ແລະ ການບໍລິການດ້ານກະສິກໍາ;
7. **ກຸ່ມ ການຜະລິດ ກະສິກໍາ ໝາຍເຖິງ**: ການຈັດຕັ້ງຂອງຊາວກະສິກອນຂະໜາດນ້ອຍ ທີ່ໄດ້ຜ່ານ ຂະບວນການຮຽນຮູ້ມາແລ້ວ ພ້ອມກັນສະໝັກໃຈສ້າງຕັ້ງຂຶ້ນ ຖືກຕ້ອງຕາມມາດຖານເງື່ອນໄຂ ທີ່ ກໍານົດໄວ້ໃນ ຂໍ້ຕົກລົງ ຂອງກະຊວງກະສິກໍາ ແລະ ປ່າໄມ້ ເລກທີ 2984, ເພື່ອຮ່ວມມືຊ່ວຍເຫຼືອຊຶ່ງ ກັນ ແລະ ກັນ ໃນການວາງແຜນການຜະລິດ, ຊ່ວຍກັນຄໍ້າປະກັນແຫຼ່ງທຶນ, ຮ່ວມກັນຊື້ປັດໃຈການ ຜະລິດ, ການປຸງແຕ່ງ, ຮ່ວມກັນຂາຍຜົນຜະລິດ ແລະ ຊ່ວຍເຫຼືອກັນທາງດ້ານສະຫວັດດີການສັງຄົມ ລະຫວ່າງສະມາຊິກ ແລະ ຄອບຄົວຂອງສະມາຊິກດ້ວຍກັນ;
8. **ສະຫະກອນຜະລິດ ກະສິກໍາ** ແມ່ນການຈັດຕັ້ງວິສະຫະກິດລວມໝູ່ຂອງຊາວກະສິກອນ ທີ່ສະໝັກໃຈ ຕັ້ງຂຶ້ນ ຖືກຕ້ອງຕາມມາດຖານເງື່ອນໄຂ ທີ່ກໍານົດໄວ້ໃນ ຂໍ້ຕົກລົງ ຂອງກະຊວງກະສິກໍາ ແລະ ປ່າໄມ້ ເລກທີ 2983, ເພື່ອຮ່ວມມືຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນການຜະລິດ ກະສິກໍາ ເປັນສິນຄ້າ ພ້ອມ ທັງໃຫ້ການບໍລິການດ້ານການສະໜອງປັດໄຈການຜະລິດ, ສິນເຊື່ອ ແລະ ການຈໍາໜ່າຍຜົນຜະລິດ, ລວມທັງການຮັບປະກັນທາງດ້ານສະຫວັດດີການສັງຄົມ ລະຫວ່າງສະມາຊິກ ແລະ ຄອບຄົວສະມາຊິກ ດ້ວຍກັນ.

ມາດຕາ 4 ນະໂຍບາຍຂອງລັດ

ລັດສ້າງຕັ້ງກອງທຶນສົ່ງເສີມກະສິກໍາ ເພື່ອຊຸກຍູ້ການຜະລິດ ຂອງ ຊາວກະສິກໍາ, ກຸ່ມການຜະລິດ, ສະຫະກອນ, ສະມາຄົມ, ຫົວໜ່ວຍຜະລິດ, ຫົວໜ່ວຍທຸລະກິດ ກະສິກໍາ ແລະ ບໍລິການ ໃຫ້ມີປະສິດ ທິພາບ, ມີປະສິດທິຜົນ ແລະ ມີຄວາມຍືນຍົງ, ກອງທຶນສົ່ງເສີມກະສິກໍາໄດ້ມາຈາກ ການປະກອບ ສ່ວນ ຂອງ ຊາວກະສິກໍາ, ກຸ່ມການຜະລິດ, ສະຫະກອນ, ສະມາຄົມ, ຫົວໜ່ວຍຜະລິດ, ຫົວໜ່ວຍທຸລະກິດ ກະສິ ກໍາ ແລະ ບໍລິການ, ທຶນປະກອບຂອງລັດ, ທຶນປະກອບຂອງປະຊາຊົນ, ທຶນຊ່ວຍເຫຼືອຈາກສາກົນ.

ມາດຕາ 5 ຫຼັກການ ບໍລິຫານຄຸ້ມຄອງ ແລະ ນໍາໃຊ້ເງິນ "ກສຍ" ໃຫ້ປະຕິບັດຕາມຫຼັກການດັ່ງນີ້

1. ຮັບປະກັນຄວາມໂປ່ງໃສໃນການບໍລິຫານ ແລະ ການນໍາໃຊ້ກອງທຶນ ໃຫ້ບັນລຸຕາມເປົ້າໝາຍ ແລະ ມີ ປະສິດທິຜົນສູງ;
2. ທຸກລາຍຮັບ, ລາຍຈ່າຍ ຕ້ອງຜ່ານລະບົບບັນຊີຄັງເງິນແຫ່ງຊາດ ທີ່ມີຢູ່ໃນແຕ່ລະເມືອງ, ແຂວງ, ລົງ ບັນຊີຕາມຫຼັກການ ແລະ ລະບຽບການພື້ນຖານການບັນຊີແຫ່ງລັດ;
3. ມີແຜນການນໍາໃຊ້ທຶນ ຢ່າງລະອຽດ ແລະ ໄດ້ຮັບການອະນຸມັດທີ່ຖືກຕ້ອງ, ນໍາໃຊ້ທຶນໃຫ້ຖືກຕາມເປົ້າ , ປະຢັດ ແລະ ມີປະສິດທິຜົນ;

4. ຮັບປະກັນ ການຕິດຕາມກວດກາ, ການຕີລາຄາ, ການສະຫຼຸບ ແລະ ລາຍງານຢ່າງເປັນປົກກະຕິ ຕາມແຜນການປະຈຳແຕ່ລະປີ;
5. ມີການ ກວດກາ ແລະ ກວດສອບ ເປັນປົກກະຕິ ຕາມກົດໝາຍ ແລະ ລະບຽບການ.

ມາດຕາ 6 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ນຳໃຊ້ສະເພາະ ຊາວກະສິກອນ, ກຸ່ມການຜະລິດ, ສະຫະກອນ, ສະມາຄົມ ແລະ ນັກທຸລະກິດ ຜູ້ປະກອບການ ດ້ານກະສິກຳ ທີ່ດຳເນີນການຜະລິດ, ການເກັບຊື້ ແລະ ສົ່ງອອກ ສິນຄ້າກະສິກຳ ແລະ ການຈັດຕັ້ງພາກລັດ ພາຍໃນແຂວງ.

ໝວດທີ 2
ແຫຼ່ງລາຍຮັບ ແລະ ການນຳໃຊ້ກອງທຶນ

ມາດຕາ 7 ແຫຼ່ງລາຍຮັບ "ກສຍ" ໄດ້ມາຈາກ

1. ການປະກອບສ່ວນ ຕາມກຳນົດ, ຈຳນວນ ຂອງຜົນຜະລິດກະສິກຳ ທີ່ ສົ່ງອອກ ແລະ ນຳເຂົ້າ ພາຍໃນ ແລະ ຕ່າງປະເທດ ຂອງ ຊາວກະສິກອນ, ກຸ່ມການຜະລິດ, ສະຫະກອນ, ສະມາຄົມ ແລະ ນັກທຸລະກິດ ຜູ້ປະກອບການ ດ້ານກະສິກຳ;
2. ການປະກອບສ່ວນ ຕາມກຳນົດ ຂອງໂຮງງານຮັບຊື້ຜົນຜະລິດ ກະສິກຳ ຢູ່ພາຍໃນ ຕາມປະເພດຜົນຜະລິດທີ່ຮັບຊື້;
3. ດອກເບ້ຍຈາກການປ່ອຍເງິນໃຫ້ກູ້, ດອກເບ້ຍເງິນຝາກທະນາຄານ;
4. ການຊ່ວຍເຫຼືອ ຈາກ ບຸກຄົນທົ່ວໄປ, ຊາວກະສິກອນ, ກຸ່ມການຜະລິດ, ສະຫະກອນ, ສະມາຄົມ ແລະ ນັກທຸລະກິດ ຜູ້ປະກອບການ ດ້ານກະສິກຳ, ອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສາກົນ, ໂຄງການພັດທະນາຕ່າງໆ ຢູ່ ພາຍໃນ ແລະ ຕ່າງປະເທດ;
5. ງົບປະມານຂອງລັດປະກອບໃຫ້;
6. ການກູ້ຢືມຈາກສະຖາບັນການເງິນ ທັງພາຍໃນ ແລະ ຕ່າງປະເທດ.

ມາດຕາ 8 ການຈັດເກັບເງິນເຂົ້າກອງທຶນ ແລະ ອັດຕາການປະກອບສ່ວນທຶນ

1. ຄະນະກຳມະການຄຸ້ມຄອງ "ກສຍ" ມອບ ໃບຄິດໄລ່, ໃບຮັບເງິນ ແລະ ເຮັດບົດບັນທຶກກັບ ຫ້ອງການ, ຂະແໜງການ ທີ່ມີໜ້າທີ່ ຄຸ້ມຄອງ ການນຳອອກ-ນຳເຂົ້າ ສິນຄ້າ ກະສິກຳ ແຕ່ລະຂັ້ນ ຄື: ຫ້ອງການ ກະສິກຳ ແລະ ປ່າໄມ້ເມືອງ, ຫ້ອງການການເງິນເມືອງ, ຫ້ອງການການອຸດສາຫະກຳ ແລະ ການຄ້າເມືອງ, ຫ້ອງການດ່ານຂາອອກ-ນຳເຂົ້າ ແຕ່ລະດ່ານ, ໜ່ວຍງານປະຕູດຽວ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ສະພາອຸສາຫະກຳ ແລະ ການຄ້າແຂວງ ໂດຍຄະນະກຳມະການຄຸ້ມຄອງລົງກວດກາ ການມອບເງິນ ເຂົ້າບັນຊີກອງທຶນ ປີ ລະ 2 ຄັ້ງ ຫຼື ຫາກເຫັນວ່າມີຄວາມຈຳເປັນ ຈະລົງໄປໄດ້ທຸກເວລາ;
2. ບັນດາ ຫ້ອງການ, ຂະແໜງການ ທີ່ມີໜ້າທີ່ ຄຸ້ມຄອງ ການນຳອອກສິນຄ້າ ກະສິກຳ ເປັນຜູ້ ອອກໃບຄິດໄລ່, ໃບຮັບເງິນ ຂອງ "ກສຍ" ພ້ອມດຽວກັນກັບການປະກອບເອກະສານ ສົ່ງອອກ ແຕ່ລະຄັ້ງ ທີ່ເຫັນວ່າ ກຸ່ມການຜະລິດ, ສະຫະກອນ, ສະມາຄົມ ແລະ ນັກທຸລະກິດຜູ້ປະກອບການ, ຫົວໜ່ວຍທຸລະກິດ ດ້ານກະສິກຳ ຍັງບໍ່ທັນໄດ້ມອບເງິນປະກອບສ່ວນເຂົ້າ"ກສຍ";
3. ບັນດາ ຫ້ອງການ, ຂະແໜງການ ທີ່ມີໜ້າທີ່ ຄຸ້ມຄອງ ການນຳອອກສິນຄ້າ ກະສິກຳ ຕ້ອງມອບເງິນ ຫຼື ໂອນ ເຂົ້າບັນຊີ ທີ່ ຄະນະກຳມະການຄຸ້ມຄອງ "ກສຍ" ທີ່ ເປີດໄວ້ຢູ່ລະບົບຄັງເງິນແຫ່ງຊາດ ໃນແຕ່

ລະເມືອງ, ແຂວງ ຫຼື ຢູ່ ທະນາຄານທຸລະກິດ, ບໍ່ໃຫ້ກາຍວັນທີ 25 ແຕ່ລະເດືອນ ແລະ ຕ້ອງມອບ ຫຼື ໂອນເຂົ້າ 100 ສ່ວນຮ້ອຍ ຂອງຈຳນວນທີ່ເກັບໄດ້ປະຈຳຢູ່ແຕ່ລະບ່ອນ;

4. ອັດຕາ ເງິນປະກອບສ່ວນເຂົ້າ “ກສຍ” ນີ້ບໍ່ໃຫ້ ຕັດ ຫຼື ຫັກອອກຈາກລາຄາເກັບຊື້ນຳປະຊາຊົນຜູ້ຜະລິດ ກຳນົດອັດຕາການປະກອບສ່ວນດັ່ງນີ້

ລ/ດ	ລາຍການຜົນຜະລິດ	ຫົວໜ່ວຍ	ນຳເຂົ້າ-ສົ່ງອອກພາຍໃນແຂວງ (ກີບ)	ການນຳເຂົ້າ (ກີບ)		ການສົ່ງອອກ (ກີບ)		ໝາຍເຫດ
				ຈາກຕ່າງແຂວງ	ຈາກຕ່າງປະເທດ	ໄປຕ່າງແຂວງ	ໄປຕ່າງປະເທດ	
1.	ເຂົ້າເປືອກ	ກິໂລ	0	0	0	0	3	
2.	ເຂົ້າສານ	ກິໂລ	0	0	0	0	5	
3.	ສາລີຝັກ	ກິໂລ	0	0	0	0	3	
4.	ສາລີເມັດ	ກິໂລ	0	0	0	0	5	
5.	ໝາກງາ	ກິໂລ	0	0	0	0	5	
6.	ໝາກເດືອຍເປືອກ	ກິໂລ	0	0	0	0	3	
7.	ໝາກເດືອຍສີ	ກິໂລ	0	0	0	0	5	
8.	ມັນຕົ້ນຕາກແຫ້ງ	ກິໂລ	0	0	0	0	2	
9.	ແປ້ງມັນຕົ້ນ	ກິໂລ	0	0	0	0	3	
10.	ຖົ່ວດິນ	ກິໂລ	0	0	0	0	5	
11.	ຖົ່ວແດງ	ກິໂລ	0	0	0	0	5	
12.	ຖົ່ວດຳ	ກິໂລ	0	0	0	0	5	
13.	ຖົ່ວເຫຼືອງຝັກສົດ	ກິໂລ	0	0	0	0	10	
14.	ແກ່ນໝາກນ້ຳມັນ	ກິໂລ	0	0	0	0	10	
15.	ນ້ຳມັນປາມ	ກິໂລ	0	0	0	0	10	
16.	ຢາງພາລາ	ກິໂລ	0	0	0	0	10	
17.	ຊາແຫ້ງ	ກິໂລ	0	0	0	0	10	
18.	ຢາງບົງ	ກິໂລ	0	0	0	0	10	
19.	ປໍສາ	ກິໂລ	0	0	0	0	10	
20.	ແຂມ	ກິໂລ	0	0	0	0	10	
21.	ໝາກຕາວ	ກິໂລ	0	0	0	0	10	
22.	ຫົ່ມໄມ້ອັດ	ກິໂລ	0	0	0	0	10	
23.	ຢາສູບ	ກິໂລ	0	0	0	0	10	
24.	ນ້ຳມັນຫົວສີໄຄເຄື່ອງ	ລິດ	0	0	0	0	10	

ລ/ດ	ລາຍການຜົນຜະລິດ	ຫົວໜ່ວຍ	ນຳເຂົ້າ-ສົ່ງອອກພາຍໃນແຂວງ (ກີບ)	ການນຳເຂົ້າ (ກີບ)		ການສົ່ງອອກ (ກີບ)		ໝາຍເຫດ
				ຈາກຕ່າງແຂວງ	ຈາກຕ່າງປະເທດ	ໄປຕ່າງແຂວງ	ໄປຕ່າງປະເທດ	
25.	ຂີງອ່ອນ	ກິໂລ	0	0	0	0	5	
26.	ຂີງແກ່	ກິໂລ	0	0	0	0	5	
27.	ມັນດ້າງ	ກິໂລ	0	0	0	0	5	
28.	ເຜືອກ	ກິໂລ	0	0	0	0	5	
29.	ໝາກເຜັດແຫ້ງ	ກິໂລ	0	0	0	0	10	
30.	ໝາກໂມ	ກິໂລ	0	0	0	0	3	
31.	ໝາກແຕງດອງ	ກິໂລ	0	0	0	0	5	
32.	ໝາກກ້ວຍ	ກິໂລ	0	0	0	0	3	
33.	ໝາກໄມ້ຊະນິດອື່ນ	ກິໂລ	0	0	10	0	0	
34.	ຄວາຍ	ໂຕ	0	10.000		10.000		
35.	ງົວ	ໂຕ	0	5.000		5.000		
36.	ໝູພັນ	ໂຕ	0	2.000		2.000		
37.	ໝູລາດ	ໂຕ	0	1.000		1.000		
38.	ແບ້	ໂຕ	0	0	1.000	0	0	
39.	ໄກ່+ເປັດ (ເປັນອາຫານ)	ກິໂລ	0	0	20	0	0	
40.	ປາ(ເປັນອາຫານ)	ກິໂລ	0	0	15	0	0	

ມາດຕາ 9 ເປົ້າໝາຍ ການນຳໃຊ້ ເງິນຂອງ"ກສຍ"ໃຫ້ປະຕິບັດດັ່ງນີ້ ດັ່ງນີ້

1. <u>ຈ່າຍເພື່ອພັດທະນາ ແລະ ຊ່ວຍເຫຼືອ ຊາວກະສິກອນ, ກຸ່ມການຜະລິດ, ສະຫະກອນ, ຫົວໜ່ວຍທຸລະກິດ 75ສ່ວນຮ້ອຍ ຂອງລາຍຮັບໝົດປີ ແລະ ແບ່ງໃຊ້ຈ່າຍດັ່ງນີ້</u>
   1) ຈ່າຍ ພັດທະນາ ຊາວກະສິກອນ, ກຸ່ມການຜະລິດ, ສະຫະກອນ, ສະມາຄົມ, ວິສາຫະກິດ ຂະໜາດນ້ອຍ, ຂະໜາດກາງ ໃນຂົງເຂດການຜະລິດກະສິກຳເປັນສິນຄ້າ ເປັນຕົ້ນແມ່ນ ການຝຶກອົບຮົມທາງດ້ານເຕັກນິກ ການຜະລິດ, ການປຸງແຕ່ງ, ການບໍລິຫານທຸລະກິດ ຈຳນວນ 20 ສ່ວນຮ້ອຍ;
   2) ຈ່າຍ ສົ່ງເສີມກິດຈະກຳ ການຜະລິດ ຂອງຊາວກະສິກອນ, ກຸ່ມການຜະລິດ, ສະຫະກອນ, ສະມາຄົມ, ຫົວໜ່ວຍທຸລະກິດ ເປັນຕົ້ນແມ່ນ: ການໃຫ້ກູ້ຢືມທຶນ, ການຊ່ວຍໝູນລາຄາ, ການຊ່ວຍເຫຼືອ ຈຳນວນ 45 ສ່ວນຮ້ອຍ;
   3) ເປັນຄັງແຮສຸກເສີນ ຈຳນວນ10ສ່ວນຮ້ອຍ.
2. <u>ໃຊ້ຈ່າຍວຽກງານບໍລິຫານ ແລະ ຄຸ້ມຄອງກອງທຶນ 15 ສ່ວນຮ້ອຍ ຂອງລາຍຮັບໝົດປີ (ຍົກເວັ້ນລາຍຮັບ ການຊ່ວຍເຫຼືອລ້າ, ລັດປະກອບໃຫ້, ການກູ້ຢືມ)</u>
   1) ຈ່າຍ ເຂົ້າໃນວຽກງານ ຄຸ້ມຄອງ-ບໍລິຫານ, ເງິນລົງເດືອນໄຫວວຽກຂອງກອງທຶນຂັ້ນແຂວງ ຈຳນວນ 5ສ່ວນຮ້ອຍ;

2) ມອບໃຫ້ ຄະນະກຳມະການຄຸ້ມຄອງ "ກສຍ" ຂັ້ນເມືອງ, ຫ້ອງການ, ຂະແໜງການ, ທີ່ເປັນຜູ້ຈັດເກັບເງິນເຂົ້າກອງທຶນ ນຳໃຊ້ເຂົ້າໃນການລົງເຄື່ອນໄຫວ ຊຸກຍູ້ວຽກງານ, ການປະຊຸມຢູ່ຂັ້ນເມືອງ, ສະເພາະຂັ້ນແຂວງ ມອບໃຫ້ຫ້ອງການ, ຂະແໜງການ ທີ່ໄດ້ເກັບເງິນເຂົ້າກອງທຶນນັ້ນ ໃຊ້ຈ່າຍ. ຈຳນວນ10 ສ່ວນຮ້ອຍ ຂອງແຕ່ລະພາກສ່ວນທີ່ເກັບໄດ້.

ມາດຕາ 10 ຂັ້ນຕອນການຂໍອະນຸຍາດນຳໃຊ້ເງິນກອງທຶນ

ຜູ້ມີເງື່ອນໄຂນຳໃຊ້ກອງທຶນຕ້ອງປະຕິບັດຕາມ ລະບຽບການ, ຫຼັກການນຳໃຊ້ເງິນ "ກສຍ" ຂອງຄະນະກຳມະການຄຸ້ມຄອງ "ກສຍ" ວາງອອກ, ແຜນກິດຈະກຳຕ້ອງນອນໃນແຜນລາຍຈ່າຍປະຈຳປີ ຂອງກອງທຶນທີ່ປະທານຄະນະກຳມະການຄຸ້ມຄອງ "ກສຍ" ໄດ້ຮັບຮອງເອົາ ແລະ ປະກອບເອກະສານດັ່ງນີ້

1. ໃບສະເໜີ ຂໍນຳໃຊ້ເງິນ"ກສຍ" ເຖິງ ປະທານ "ກສຍ" ຂັ້ນແຂວງ;
2. ແຜນກິດຈະກຳ ຕ້ອງລະບຸລາຍລະອຽດຢ່າງຈະແຈ້ງ;
3. ແຜນການໃຊ້ຈ່າຍຕ້ອງກຳນົດຢ່າງລະອຽດ.

ໃບສະເໜີ ເຖິງ ປະທານຄະນະກຳມະການຄຸ້ມຄອງ "ກສຍ" ຂັ້ນແຂວງ. ຂອງຜູ້ມີເງື່ອນນຳໃຊ້ ຢູ່ຂັ້ນເມືອງ ເຊັນຜ່ານປະທານຄະນະກຳມະການຄຸ້ມຄອງ "ກສຍ" ຂັ້ນເມືອງ, ຂອງຜູ້ມີເງື່ອນນຳໃຊ້ ຢູ່ຂັ້ນແຂວງ ແມ່ນສະເໜີໂດຍກົງ, ເອກະສານດັ່ງກ່າວ ສົ່ງເຖິງກອງເລຂາ ເພື່ອຄົ້ນຄ້ວາ, ກວດກາ ພາຍໃນເວລາບໍ່ກົນ 5 ວັນ, ເພື່ອແຈ້ງກັບຜູ້ສະເໜີ ຫຼື ນຳສະເໜີ ຕໍ່ ປະທານຄະນະກຳມະການຄຸ້ມຄອງ"ກສຍ". ພິຈາລະນາຕົກລົງ ໃນໄລຍະເວລາ 5 ວັນ, ຫຼັງຈາກໄດ້ຮັບການຕົກລົງ ພາຍໃນກຳນົດເວລາ 5 ວັນໃຫ້ຜູ້ມີເງື່ອນໄຂໄດ້ຮັບເງິນ.

ມາດຕາ 11 ການຄຸ້ມຄອງ ແລະ ສະຫຼຸບ ບັນຊີເງິນຝາກ ຂອງ "ກສຍ"

1. ຄະນະກຳມະການ ຄຸ້ມຄອງ "ກສຍ" ເປັນຜູ້ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດຕາມ ມາດຕາ 01;
2. ບັນຊີເງິນຝາກ "ກສຍ" ຕ້ອງເປີດໄວ້ ໃນລະບົບຄັງເງິນແຫ່ງຊາດປະຈຳແຂວງ, ປະຈຳເມືອງ ມີຄະນະກອງເລຂາທີ່ປະຈຳການຢູ່ພະແນກ ການເງິນ, ຫ້ອງການເມືອງ ເປັນຜູ້ຕິດຕາມ ແລະ ສະຫຼູບລາຍງານເປັນແຕ່ລະເດືອນ;
3. ປະທານຄະນະກຳມະການຄຸ້ມຄອງ "ກສຍ"; ເປັນຕົກລົງ ອານຸມັດການຈ່າຍເງິນກອງທຶນ, ພະແນກການເງິນແຂວງເປັນຜູ້ເບີກຈ່າຍຕົວຈິງ;
4. ພາຍໃຕ້ການຄຸ້ມຄອງ ຕິດຕາມ ກວດກາ ຂອງຄະນະກຳມະການຄຸ້ມຄອງ "ກສຍ".

ໝວດທີ 3
ນະໂຍບາຍຕໍ່ຜູ້ມີສ່ວນຮ່ວມປະຕິບັດວຽກງານ

ມາດຕາ 12 ນະໂຍບາຍ

1. ຊາວກະສິກອນ, ກຸ່ມການຜະລິດ, ສະຫະກອນ, ສະມາຄົມ ແລະ ນັກທຸລະກິດ ຜູ້ປະກອບການ ດ້ານກະສິກຳ ທີ່ປະກອບສ່ວນເງິນ ເຂົ້າກອງທຶນ ຈະໄດ້ຮັບຜົນປະໂຫຍດດັ່ງນີ້
   1) ໄດ້ຮັບການເຂົ້າຮ່ວມ ຝຶກອົບຮົມ, ເຂົ້າຮ່ວມກອງປະຊຸມ ປະຈຳປີຂອງກອງທຶນ;
   2) ໄດ້ຮັບຂໍ້ມູນຂ່າວສານ ກ່ຽວກັບລາຄາສິນຄ້າ ແຕ່ລະໄລຍະ;
   3) ຈະໄດ້ຮັບການກູ້ຢືມເງິນຈາກກອງທຶນ, ຕາມທີ່ກຳນົດໄວ້ໃນມາດຕາ 13 ຂອງຂໍ້ຕົກລົງສະບັບນີ້;
   4) ຈະໄດ້ສິດໃນການຄ້ຳປະກັນ ຈາກກອງທຶນໃນ ເວລາຈຳເປັນ ຫຼື ມີຄວາມຕ້ອງການ; ຂ

5) ຈະໄດ້ຮັບການຊ່ວຍເຫຼືອ ໃນເວລາ ການດຳເນີນກິດຈະການ, ການຜະລິດ ທີ່ໄດ້ຮັບຜົນກະທົບ ຈາກພະຍາດລະບາດ, ສັດຕູພືດທຳລາຍ, ນ້ຳຖ້ວມ, ແຫ້ງແລ້ງ, ໄຟໄໝ້ ເຮັດໃຫ້ມີຜົນເສຍຫາຍ ຕາມທີ່ກຳນົດໄວ້ໃນ ມາດຕາ 15 ຂອງຂໍ້ຕົກລົງສະບັບນີ້.

2. ອົງການຈັດຕັ້ງລັດຈະໄດ້ຮັບຜົນປະໂຫຍດດັ່ງນີ້

1) ແນວທາງຂອງພັກ, ນະໂຍບາຍຂອງລັດ ຕໍ່ກັບວຽກງານ ຊຸກຍູ້ ສົ່ງເສີມ ກະສິກຳ ໄດ້ຮັບການຈັດຕັ້ງປະຕິບັດຢ່າງກ້ວາງຂວາງ;

2) ມີເງິນສະໜັບສະໜູນໃນການລົງເຄື່ອນໄຫວ ຊຸກຍູ້ ສົ່ງເສີມ ວຽກງານການຜະລິດກະສິກຳ, ການບໍລິການກຸ່ມການຜະລິດ ແລະ ບໍລິການ;

3) ໄດ້ຮັບຂໍ້ມູນສະຖິຕິທາງດ້ານການສົ່ງອອກ-ນຳເຂົ້າທາງດ້ານກະສິກຳຖືກຕ້ອງຊັດເຈນ.

ມາດຕາ 13 ນະໂຍບາຍ ການໃຫ້ກູ້ຢືມ

ກຸ່ມການຜະລິດ, ສະຫະກອນ , ສະມາຄົມ ແລະ ນັກທຸລະກິດຜູ້ປະກອບການ, ຫົວໜ່ວຍທຸລະກິດ ດ້ານກະສິກຳ ໄດ້ຮັບການກູ້ຢືມໃນເງື່ອນໄຂດັ່ງນີ້

1. ກູ້ຢືມໃນໄລຍະສັ້ນ ສະເພາະ ກິດຈະກຳການຜະລິດ ເທົ່ານັ້ນ (ບໍ່ແມ່ນສິ່ງກໍ່ສ້າງໂຄງລ່າງ ແລະ ກົນຈັກ);
2. ອັດຕາດອກເບ້ຍ 10% ຕໍ່ປີ; ແຕ່ລະປີ ແລະ ສາມາດປັບໄດ້ ໂດຍກອງປະຊຸມປະຈຳປີ ຂອງຄະນະກຳມະການຄຸ້ມຄອງກອງທຶນ;
3. ໄລຍະເວລາ ບໍ່ເກີນ 12 ເດືອນ;
4. ວົງເງິນກູ້ຢືມ ບໍ່ເກີນ 50% ຂອງແຜນກິດຈະກຳ;
5. ມີຫຼັກຊັບຄ້ຳປະກັນ ປະເພດທີ່ດິນ ທີ່ມີມູນຄ່າຫຼາຍກ່ວາ ວົງເງິນກູ້ຢືມ 1 ເທົ່າ; (ສະເພາະຫົວໜ່ວຍທຸລະກິດ, ນັກທຸລະກິດ);
6. ຜູ້ສະເໜີກູ້ຢືມ ຕ້ອງບໍ່ມີໜີ້ສິນແກ່ຍາວ ໃນ ສະຖາບັນການເງິນຈຸລະພາກ ຫຼື ທະນາຄານ ຫຼື ກອງທຶນພັດທະນາບ້ານ ໃດໜຶ່ງ;
7. ສັນຍາກູ້ຢືມ ຕ້ອງໄດ້ຢັ້ງຢືນຄວາມຖືກຕ້ອງ ນຳທະບຽນສານ ຢູ່ ພະແນກ ຍຸຕິທຳແຂວງ ຫຼື ຫ້ອງການຍຸຕິທຳ ເມືອງ.

ມາດຕາ 14 ການຄ້ຳປະກັນ

ກຸ່ມການຜະລິດ, ສະຫະກອນ, ສະມາຄົມ ແລະ ນັກທຸລະກິດຜູ້ປະກອບການ, ຫົວໜ່ວຍທຸລະກິດ ດ້ານກະສິກຳ, ທີ່ ດຳເນີນການຜະລິດ, ທຸລະກິດ ກັບ ຄູ່ ຮ່ວມສັນຍາ ຈະໄດ້ຮັບການຄ້ຳປະກັນສັນຍາ ຈາກ "ກສຍ".ຖ້າຫາກມີຄວາມຕ້ອງການ.

ມາດຕາ 15 ການຊ່ວຍເຫຼືອ

ຊາວກະສິກອນ, ກຸ່ມການຜະລິດ, ສະຫະກອນ, ສະມາຄົມ ແລະ ນັກທຸລະກິດຜູ້ປະກອບການ, ຫົວໜ່ວຍທຸລະກິດ ດ້ານກະສິກຳ ຈະໄດ້ຮັບການຊ່ວຍເຫຼືອ ໃນເວລາດຳເນີນກິດຈະການ, ການຜະລິດ ທີ່ມີຜົນເສຍຫາຍ ຈາກພະຍາດລະບາດ, ສັດຕູພືດທຳລາຍ, ນ້ຳຖ້ວມ, ແຫ້ງແລ້ງ, ໄຟໄໝ້ ໃນກໍລະນີດັ່ງນີ້

1. ກໍລະນີ ທີ່ ໄດ້ປະກາດເປັນສະພາວະ ການລະບາດ ແລະ ແມ່ນການຈຳກັດ ປ້ອງກັນບໍ່ໃຫ້ແຜ່ອອກ (ທຳລາຍກ່ອນ) ແມ່ນຈະໄດ້ຮັບການ ທົດແທນຄືນ ເປັນແນວພັນ ຕາມຈຳນວນທີ່ໄດ້ທຳລາຍໄປ;
2. **ກໍລະນີ ພະຍາດລະບາດ, ສັດຕູພືດທຳລາຍ;**

   1) ທີ່ກຳລັງເລີ່ມ ແລະ ຄາດຄະເນຜົນເສຍຫາຍບໍ່ເກີນ 60ສ່ວນຮ້ອຍ ແມ່ນໄດ້ຮັບການຊ່ວຍເຫຼືອ ຢາ, ອຸປະກອນທີ່ຈຳເປັນ ໃຊ້ເຂົ້າໃນ ການຈຳກັດ, ການປ້ອງກັນບໍ່ໃຫ້ແຜ່ອອກ;

2) ທີ່ມີຜົນເສຍຫາຍ ເກີນ 60ສ່ວນຮ້ອຍ ຂຶ້ນໄປ ຈະໄດ້ຮັບການຊ່ວຍເຫຼືອ ທົດແທນຄືນ ເປັນແນວພັນຈຳນວນ 50ສ່ວນຮ້ອຍຂອງແນວພັນທີ່ນຳໃຊ້.

3. ກໍລະນີ ໄພແຫ້ງແລ້ງ

1) ທີ່ກຳລັງເລີ່ມ ແລະ ຄາດຄະເນຜົນເສຍຫາຍບໍ່ເກີນ 60ສ່ວນຮ້ອຍ ແມ່ນໄດ້ຮັບການຊ່ວຍເຫຼືອ ອຸປະກອນທີ່ຈຳເປັນ ໃຊ້ເຂົ້າຕ້ານແລ້ງ;

2) ທີ່ມີຜົນເສຍຫາຍ ເກີນ 60ສ່ວນຮ້ອຍ ຂຶ້ນໄປ ຈະໄດ້ຮັບການຊ່ວຍເຫຼືອ ທົດແທນຄືນ ເປັນແນວພັນຈຳນວນ100ສ່ວນຮ້ອຍຂອງແນວພັນທີ່ນຳໃຊ້.

4. ກໍລະນີ ໄຟໄໝ້, ນ້ຳຖ້ວມ.

1) ຄາດຄະເນຜົນເສຍຫາຍ ບໍ່ເກີນ 60ສ່ວນຮ້ອຍ ແມ່ນໄດ້ຮັບການຊ່ວຍເຫຼືອ ອຸປະກອນທີ່ຈຳເປັນ ໃຊ້ເຂົ້າຕ້ານແລ້ງ ແລະ ປ້ອງກັນໄຟ;

2) ທີ່ມີຜົນເສຍຫາຍ ເກີນ 60ສ່ວນຮ້ອຍ ຂຶ້ນໄປ ຈະໄດ້ຮັບການຊ່ວຍເຫຼືອ ທົດແທນຄືນ ເປັນແນວພັນຈຳນວນ 100ສ່ວນຮ້ອຍຂອງແນວພັນທີ່ນຳໃຊ້.

ການຕີລາຄາຜົນເສຍຫາຍ ແມ່ນຄະນະກຳມະການຂັ້ນບ້ານ, ຄະນະກຳມະການຂັ້ນເມືອງ ເປັນຜູ້ປະເມີນຜົນເສຍຫາຍພ້ອມທັງຂຶ້ນບັນຊີລະອຽດ ເພື່ອສະເໜີຕໍ່ປະທານຄະນະກຳມະການຄຸ້ມຄອງ "ກສຍ".

ມາດຕາ 16 ຜູ້ທີ່ມີເງື່ອນໄຂນຳໃຊ້ເງິນ"ກສຍ"

1. ຂະແໜງການ ກະສິກຳ ແລະ ປ່າໄມ້;
2. ຂະແໜງການ ອຸດສະຫະກຳ ແລະ ການຄ້າ (ສະເພາະວຽກມທີ່ຽວກັບການສົ່ງເສີມກະສິກຳ);
3. ຫົວໜ່ວຍທຸລະກິດ (ສະເພາະທຸລະກິດກ່ຽວກັບການສົ່ງເສີມກະສິກຳ);
4. ກຸ່ມການຜະລິດ (ມີຊາວກະສິກອນທີ່ເປັນສະມາຊິກກຸ່ມ);
5. ສະຫະກອນ, ສະມາຄົມ;
6. ຕົວແບບການຜະລິດ;
7. ຄະນະກຳມະການຄຸ້ມຄອງ "ກສຍ" ແຕ່ລະຂັ້ນ.

ໝວດທີ 4

ຄະນະກຳມະການຄຸ້ມຄອງ "ກສຍ"

ມາດຕາ 17 ຄະນະກຳມະການ ຄຸ້ມຄອງ "ກສຍ" ຂັ້ນແຂວງປະກອບດ້ວຍ

1. ຮອງເຈົ້າແຂວງ (ຜູ້ຊີ້ນຳວຽກງານເສດຖະກິດ) ເປັນປະທານ;
2. ຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ແຂວງ ເປັນຮອງ;
3. ຮອງຫົວໜ້າ ຫ້ອງວ່າການແຂວງ ເປັນກຳມະການ;
4. ຮອງຫົວໜ້າ ພະແນກ ການເງິນ ແຂວງ ເປັນກຳມະການ;
5. ຮອງຫົວໜ້າ ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ ເປັນກຳມະການ;
6. ຮອງເຈົ້າເມືອງ ຜູ້ຊີ້ນຳວຽກງານເສດຖະກິດ ເປັນກຳມະການ;
7. ປະທານ ສະພາການຄ້າ ແລະ ອຸດສາຫະກຳ ແຂວງ ເປັນກຳມະການ;
8. ຮອງຫົວໜ້າ ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ ເປັນກຳມະການ
9. ຮອງຫົວໜ້າ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ ເປັນກຳມະການ ເປັນຫົວໜ້າ ກອງເລຂາ "ກສຍ" ຂັ້ນແຂວງ".

ຄະນະກຳມະການຄຸ້ມຄອງ "ກສຍ" ເປັນຄະນະທີ່ບໍ່ປະຈຳການ, ບໍ່ມີເງິນອຸດໜູນ, ແຕ່ຈະໄດ້ຮັບເງິນອັດຕາກິນ ແລະ ຄ່າພັກເຊົາ ຈາກ "ກສຍ" ໃນເວລາລົງເຄື່ອນໄຫວຽກງານ ຢູ່ບ້ານ, ເມືອງ ແລະ ເຂົ້າຮ່ວມປະຊຸມ ຕາມແຜນການເຄື່ອນໄຫວແຕ່ລະຄັ້ງ. ຕາມອັດຕາທີ່ລັດກຳນົດໄວ້ແຕ່ລະໄລຍະ.

ມາດຕາ 18 ໜ້າທີ່ ແລະ ສິດ ຂອງປະທານ ຄະນະກຳມະການຄຸ້ມຄອງ "ກສຍ". ຂັ້ນແຂວງ

ປະທານຄະນະກຳມະການຄຸ້ມຄອງ "ກສຍ" ມີສິດ ແລະ ໜ້າທີ່ດັ່ງນີ້

1. ຮັບຜິດຊອບໂດຍກົງ ຕໍ່ຜົນໄດ້, ຜົນເສຍ ການຈັດຕັ້ງປະຕິບັດວຽກງານຂອງ "ກສຍ" ໃຫ້ມີຜົນສຳເລັດ, ບັນລຸຈຸດປະສົງ ຕາມທີ່ຄາດໝາຍໄວ້;
2. ຮຽກໂຮມ ແລະ ເປັນປະທານ ກອງປະຊຸມ ຄະນະກຳມະການຄຸ້ມຄອງ"ກສຍ";
3. ລົງລາຍເຊັນຕໍ່ບັນດາເອກະສານຂອງ "ກສຍ" ເຊັ່ນ: ແຜນການປະຈຳປີ, ບົດລາຍງານປະຈຳປີ, ຂໍ້ຕົກລົງອານຸມັດຈ່າຍເງິນກອງທຶນແຕ່ລະຄັ້ງ, ຮັບຮູ້ສັນຍາກູ້ຢືມເງິນຈາກກອງທຶນ;
4. ມອບສິດໃຫ້ຮອງປະທານ ປະຕິບັດໜ້າທີ່ແທນຕົນ ໃນໄລຍະເວລາຕິດຄັດວຽກງານ.

ມາດຕາ 19 ໜ້າທີ່ ແລະ ສິດ ຂອງຄະນະກຳມະການຄຸ້ມຄອງ "ກສຍ" ຂັ້ນແຂວງ ມີດັ່ງນີ້:

1. ຄຸ້ມຄອງບໍລິຫານ "ກສຍ" ຕາມລະບຽບການ;
2. ຄົ້ນຄ້ວາ, ແນະນຳ ການຈັດຕັ້ງປະຕິບັດ ກິດຈະກຳ ສົ່ງເສີມ ຂອງຂັ້ນເມືອງ, ຂັ້ນແຂວງ;
3. ປະກອບຄວາມເຫັນ ຕໍ່ ຮ່າງແຜນການ, ແຜນງານ, ໂຄງການ, ແຜນລາຍຈ່າຍປະຈຳປີຂອງກອງທຶນກ່ຽວກັບ ການສົ່ງເສີມກິດຈະກຳ ການຜະລິດ, ການຝຶກອົບຮົມ, ການຄຸ້ມຄອງບໍລິຫານ ແລະ ກອງປະຊຸມ;
4. ເຂົ້າຮ່ວມກອງປະຊຸມ ສະໄໝສາມັນ ແລະ ວິສາມັນ ຂອງຄະນະກຳມະການຄຸ້ມຄອງ "ກສຍ";
5. ເປັນເຈົ້າ ການ ລະດົມ ຂົນຂວາຍ ແລະ ຊອກແຫຼ່ງທຶນ ຈາກໂຄງການ ພາຍໃນ ແລະ ຕ່າງປະເທດ;
6. ຄົ້ນຄ້ວາຮ່າງສັນຍາການໃຫ້ກູ້ຢືມເງິນ ແລະ ເຊັນສັນຍາການກູ້ຢືມເງິນຈາກ "ກສຍ";
7. ຕິດຕາມ ປະເມີນຜົນ ການຄຸ້ມຄອງການເຄື່ອນໄຫວ ແລະ ການນຳໃຊ້ທຶນ "ກສຍ" ໃຫ້ຖືກຕ້ອງຕາມແຜນການ ແລະ ສອດຄ່ອງ ຕາມເປົ້າໝາຍ"ກສຍ";
8. ຄົ້ນຄ້ວາ ປະກອບຄວາມເຫັນ ຕໍ່ຮ່າງບົດສະຫຼຸບລາຍງານສະພາບການເຄື່ອນໄຫວວຽກງານປະຈຳປີຂອງ **"ກສຍ"** ເພື່ອສະເໜີຕໍ່ປະທານ ລົງລາຍເຊັນ ລາຍງານເຈົ້າແຂວງ ຮັບຊາບຢ່າງເປັນປົກກະຕິ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

ມາດຕາ 20 ກອງເລຂາຂອງຄະນະກຳມະການຄຸ້ມຄອງ "ກສຍ" ຂັ້ນແຂວງ ປະກອບດ້ວຍ:

1. ຮອງຫົວໜ້າ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ ເປັນຫົວໜ້າ;
2. ຫົວໜ້າ ຂະແໜງພັດທະນາຊົນນະບົດ ແລະ ສະຫະກອນ ພະແນກ ກປຂ ເປັນຮອງ;
3. ຫົວໜ້າ ຫ້ອງການຄຸ້ມຄອງຊັບສິນຂອງລັດ, ພະແນກ ການເງິນ ແຂວງ ເປັນຮອງ;
4. ຫົວໜ້າຂະແໜງການຄ້າພາຍໃນ, ພະແນກ ອຸດສາຫະກຳ ແລະ ການຄ້າແຂວງ ເປັນກຳມະການ;
5. ຮອງຫົວໜ້າ ຂະແໜງປູກຝັງ, ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ ເປັນກຳມະການ;
6. ຮອງຫົວໜ້າ ຂະແໜງລ້ຽງສັດ ແລະ ການປະມົງ ພະແນກ ກປຂ ເປັນກຳມະການ;
7. ວິຊາການ ຂະແໜງພັດທະນາ ຊົນນະບົດ ແລະ ສະຫະກອນ (ຜູ້ຮັບຜິດຊອບວຽກງານກອງທຶນ, ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ) ເປັນກຳມະການ

ຄະນະກອງເລຂາ ເປັນຄະນະບໍ່ປະຈຳການ ບໍ່ມີເງິນອຸດໜູນ, ແຕ່ຈະໄດ້ຮັບອັດຕາກິນ ແລະ ຄ່າພັກເຊົາ ຈາກ "ກສຍ" ຕາມອັດຕາ ທີ່ລັດໄດ້ກຳນົດໄວ້.ແຕ່ລະໄລຍະ. ໃນເວລາລົງເຄື່ອນໄຫວຽກງານ ຢູ່ບ້ານ, ເມືອງ ແລະ ເຂົ້າຮ່ວມປະຊຸມ ຕາມແຜນການເຄື່ອນ ໄຫວ ແຕ່ລະຄັ້ງ

ມາດຕາ 21 ໜ້າທີ່ ແລະ ສິດ ຂອງກອງເລຂາ ຂັ້ນແຂວງ ມີດັ່ງນີ້

1. ເປັນເສນາທິການ ໃຫ້ແກ່ຄະນະກຳມະການຄຸ້ມຄອງ "ກສຍ".
2. ຄົ້ນຄ້ວາ, ແນະນຳ ການຈັດຕັ້ງປະຕິບັດ ກິດຈະກຳ ສົ່ງເສີມ ຂອງຂັ້ນເມືອງ.
3. ສັງລວມ ແຜນການເຄື່ອນໄຫວ, ແຜນກິດຈະກຳ, ແຜນລາຍຈ່າຍ ທັງໝົດ ເພື່ອສ້າງເປັນຮ່າງ ແຜນການປະຈຳປີ ຂອງ"ກສຍ" ທົ່ວແຂວງ.
4. ສຶກສາ, ຄົ້ນຄ້ວາວິທີການ ແລະ ຮູບແບບ ໃນການລະດົມຂົນຂວາຍທຶນ ຈາກພາຍໃນ ແລະ ຕ່າງ ປະເທດ.
5. ໂຄສະນາເຜີຍແຜ່ ບົດບາດຂອງ "ກສຍ" ໃຫ້ສັງຄົມຮັບຮູ້ ແຕ່ລະໄລຍະ.
6. ຕິດຕາມ, ກວດກາ ແລະ ປະເມີນຜົນ ການນຳໃຊ້ທຶນຂອງ "ກສຍ" ທີ່ໄດ້ຮັບອະນຸມັດ.
7. ສະຫຼຸບ, ລາຍງານການເຄື່ອນໄຫວ ວຽກງານຂອງ "ກສກ" ໃນແຕ່ລະໄລຍະ.
8. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ.

ມາດຕາ 22 ຄະນະກຳມະການຄຸ້ມຄອງ "ກສຍ" ຂັ້ນເມືອງປະກອບດ້ວຍ

1. ຮອງເຈົ້າເມືອງຜູ້ຊີ້ນຳວຽກງານເສດຖະກິດ ເປັນປະທານ;
2. ຫົວໜ້າ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເປັນຮອງ;
3. ຮອງຫົວໜ້າຫ້ອງວ່າການເມືອງ ເປັນກຳມະການ;
4. ຮອງຫົວໜ້າຫ້ອງການ ການເງິນ ເມືອງ ເປັນກຳມະການ;
5. ຮອງຫົວໜ້າຫ້ອງການ ອຸດສາຫະກຳ ແລະ ການຄ້າເມືອງ ເປັນກຳມະການ;
6. ປະທານສະມາຄົມ ເກັບຊື້-ສົ່ງອອກຜົນຜະລິດກະສິກຳຂັ້ນເມືອງ ເປັນກຳມະການ;
7. ຮອງຫົວໜ້າຫ້ອງການ ວິທະຍາສາດ ແລະ ເຕັກໂນໂລຊີ ເມືອງ ເປັນກຳມະການ;
8. ຮອງຫົວໜ້າຫ້ອງການ ກະສິກຳ ແລະ ປ່າໄມ້ ເມືອງ ເປັນກຳມະການ ເປັນຫົວໜ້າ ກອງເລຂາ "ກສຍ"ຂັ້ນເມືອງ.

ຄະນະກຳມະການຄຸ້ມຄອງ "ກສຍ" ເປັນຄະນະທີ່ບໍ່ປະຈຳການ, ບໍ່ມີເງິນອຸດໜູນ, ແຕ່ຈະໄດ້ຮັບເງິນ ອັດຕາກິນ ແລະ ຄ່າພັກເຊົາ ຈາກ "ກສຍ" ຕາມອັດຕາ ທີ່ລັດໄດ້ກຳນົດໄວ້.ແຕ່ລະໄລຍະ. ໃນເວລາລົງ ເຄື່ອນໄຫວຽກງານ ຢູ່ບ້ານ, ເມືອງ ແລະ ເຂົ້າຮ່ວມປະຊຸມ ຕາມແຜນການເຄື່ອນໄຫວ ແຕ່ລະຄັ້ງ.

ມາດຕາ 23 ໜ້າທີ່ ແລະ ສິດ ຂອງປະທານ ຄະນະກຳມະການຄຸ້ມຄອງ "ກສກ".ຂັ້ນເມືອງ

ປະທານຄະນະກຳມະການຄຸ້ມຄອງ "ກສຍ" ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຮັບຜິດຊອບໂດຍກົງ ຕໍ່ຜົນໄດ້, ຜົນເສຍ ການຈັດຕັ້ງປະຕິບັດວຽກງານຂອງ "ກສຍ" ໃຫ້ມີຜົນສຳເລັດ , ບັນລຸຈຸດປະສົງ ຕາມທີ່ຄາດໝາຍໄວ້.
2. ຮຽກໂຮມ ແລະ ເປັນປະທານ ກອງປະຊຸມ ຄະນະກຳມະການຄຸ້ມຄອງ"ກສຍ" ຂັ້ນເມືອງ.
3. ລົງລາຍເຊັນຕໍ່ບັນດາເອກະສານ ອານຸມັດເງິນ ບ້ວງເມືອງຄຸ້ມຄອງ, ບ້ວງກອງທຶນ "ກສຍ" ຕາມແຜນ ປະຈຳປີ ທີ່ປະທານຄະນະກຳມະການຄຸ້ມຄອງ"ກສຍ" ຂັ້ນແຂວງຮັບຮອງ;
4. ມອບສິດໃຫ້ຮອງປະທານ ປະຕິບັດໜ້າທີ່ແທນຕົນ ໃນໄລຍະເວລາຕິດຄັດວຽກງານ.

ມາດຕາ 24 ໜ້າທີ່ ແລະ ສິດ ຂອງຄະນະກຳມະການຄຸ້ມຄອງ "ກສຍ" ຂັ້ນເມືອງ ມີດັ່ງນີ້

1. ຄຸ້ມຄອງບໍລິຫານ "ກສຍ" ຕາມລະບຽບການ;
2. ຊີ້ນຳການຈັດຕັ້ງປະຕິບັດ ກິດຈະກຳ ສົ່ງເສີມ ຂອງເມືອງ;
3. ຊີ້ນຳການ ແຜນການ, ແຜນງານ, ໂຄງການ, ແຜນລາຍຈ່າຍປະຈຳປີ ກ່ຽວກັບ ການສົ່ງເສີມກິດຈະກຳ ການຜະລິດ, ການຝຶກອົບຮົມ, ການຄຸ້ມຄອງບໍລິຫານ ແລະ ກອງປະຊຸມ ຢູ່ພາຍໃນເມືອງ;
4. ເຂົ້າຮ່ວມກອງປະຊຸມ ສະໄໝສາມັນ ແລະ ວິສາມັນ ຂອງຄະນະກຳມະການຄຸ້ມຄອງ "ກສຍ";
5. ເປັນເຈົ້າ ລະດົມ ຂົນຂວາຍ ແລະ ຊອກແຫຼ່ງທຶນ ຈາກໂຄງການ ພາຍໃນ ແລະ ຕ່າງປະເທດ;
6. ຕິດຕາມ ປະເມີນຜົນ ການຄຸ້ມຄອງການເຄື່ອນໄຫວ ແລະ ການນຳໃຊ້ທຶນ "ກສຍ" ໃຫ້ຖືກຕ້ອງຕາມ ແຜນການ ແລະ ສອດຄ່ອງ ຕາມເປົ້າໝາຍ"ກສຍ";
7. ຄົ້ນຄ້ວາ ປະກອບຄວາມເຫັນ ຕໍ່ຮ່າງບົດສະຫຼຸບລາຍງານສະພາບການເຄື່ອນໄຫວວຽກງານປະຈຳປີ ຂອງ "ກສກ" ຂັ້ນເມືອງ ເພື່ອສະເໜີຕໍ່ປະທານ ລົງລາຍເຊັນ ລາຍງານເຈົ້າເມືອງ, ປະທານຄະນະ ກຳມະການຄຸ້ມຄອງ"ກສຍ" ຂັ້ນແຂວງ ຮັບຊາບຢ່າງເປັນປົກກະຕິ;
8. ລົງກວດກາການຜະລິດ ທີ່ມີຜົນເສຍຫາຍ ຈາກໄພພິບັດແຕ່ລະຄັ້ງ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

ມາດຕາ 25 ກອງເລຂາ "ກສຍ" ຂັ້ນເມືອງປະກອບມີ

1. ຮອງຫົວໜ້າ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ ເປັນຫົວໜ້າ;
2. ຫົວໜ້າ ໜ່ວຍງານພັດທະນາຊົນນະບົດ ແລະ ສະຫະກອນ ເປັນຮອງ;
3. ຫົວໜ້າ ໜ່ວຍງານຄຸ້ມຄອງຊັບສິນຂອງລັດ, ຫ້ອງການ ການເງິນເມືອງ ເປັນຮອງ;
4. ຫົວໜ້າ ໜ່ວຍງານການຄ້າພາຍໃນ ຫ້ອງການ ການຄ້າເມືອງ ເປັນກຳມະການ;
5. ວິຊາການ ໜ່ວຍງານ ປູກຝັງ ຫ້ອງການ ກປມ ເປັນກຳມະການ;
6. ວິຊາການ ໜ່ວຍງານ ລ້ຽງສັດ ແລະ ການປະມົງ ຫ້ອງການ ກປມ ເປັນກຳມະການ;
7. ວິຊາການ ໜ່ວຍງານພັດທະນາ ຊົນນະບົດ ແລະ ສະຫະກອນ ຫ້ອງການ ກປມ (ຜູ້ຮັບຜິດຊອບວຽກ ສະຫະກອນ) ເປັນກຳມະການ.

ກອງເລຂາ ເປັນຄະນະ ທີ່ບໍ່ປະຈຳການ ບໍ່ມີເງິນອຸດໜູນ, ແຕ່ຈະໄດ້ຮັບເງິນອຸດໜູນ ຈາກ "ກສຍ" ໃນ ເວລາລົງເຄື່ອນໄຫວຽກງານ ຢູ່ບ້ານ, ເມືອງ ແລະ ເຂົ້າຮ່ວມປະຊຸມ ຕາມແຜນການເຄື່ອນໄຫວ ແຕ່ລະຄັ້ງ ຕາມອັດຕາ ທີ່ລັດໄດ້ກຳນົດໄວ້.ແຕ່ລະໄລຍະ.

ມາດຕາ 26 ໜ້າທີ່ ແລະ ສິດ ກອງເລຂາ "ກສຍ" ຂັ້ນເມືອງ ມີດັ່ງນີ້

1. ເປັນເສນາທິການ ໃຫ້ແກ່ຄະນະກຳມະການຄຸ້ມຄອງ"ກສຍ" ຂັ້ນເມືອງ;
2. ຕິດຕາມ ການຈັດຕັ້ງປະຕິບັດ ກິດຈະກຳ ສົ່ງເສີມ ຂອງເມືອງ;
3. ສັງລວມ ແຜນການເຄື່ອນໄຫວ, ແຜນກິດຈະກຳ, ແຜນລາຍຈ່າຍທັງໝົດ ເພື່ອສ້າງເປັນຮ່າງແຜນລາຍ ຈ່າຍປະຈຳປີ ຂອງ"ກສຍ" ຂອງເມືອງ;
4. ສຶກສາ, ຄົ້ນຄ້ວາວິທີການ ແລະ ຮູບແບບ ໃນການລະດົມຂົນຂວາຍທຶນ ຈາກພາຍໃນ ແລະ ຕ່າງປະເທດ;
5. ໂຄສະນາເຜີຍແຜ່ ບົດບາດຂອງ "ກສຍ" ໃຫ້ສັງຄົມຮັບຮູ້ ແຕ່ລະໄລຍະ;
6. ຕິດຕາມ, ກວດກາ ແລະ ປະເມີນຜົນ ການນຳໃຊ້ທຶນຂອງ "ກສຍ" ທີ່ໄດ້ຮັບອະນຸມັດ;

7. ສະຫຼຸບ, ລາຍງານການເຄື່ອນໄຫວ ວຽກງານຂອງ "ກສຍ" ໃນແຕ່ລະໄລຍະ;
8. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ.

ມາດຕາ 27 ຄະນະວິຊາການຕ່າງໆ

ຄະນະວິຊາການດ້ານຕ່າງໆ ແມ່ນຄະນະສະເພາະກິດ ທີ່ຄະນະກຳມະການຄຸ້ມຄອງ "ກສຍ"ສະເໜີແຕ່ງຕັ້ງຂຶ້ນ ເພື່ອຊ່ວຍວຽກ ການທົບທວນ, ປະເມີນ, ຄົ້ນຄ້ວາ ວິໄຈ ດ້ານວິຊາການ ໃນການຊຸກຍູ້ສົ່ງເສີມການຜະລິດ, ເພື່ອຄຸ້ມຄອງ "ກສຍ" ໃຫ້ມີປະສິດທິຜົນ.

ໝວດທີ 4
ລະບອບແບບແຜນການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງ "ກສຍ"

ມາດຕາ 28 ການເຄື່ອນໄຫວ ຂອງຄະນະກຳມະການຄຸ້ມຄອງ "ກສຍ"

1. ການລົງເຄື່ອນໄຫວວຽກງານ ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານຢູ່ ເມືອງ, ບ້ານ ຕາມແຜນການເຄື່ອນໄຫວ ປີ ລະຄັ້ງ;
2. ເຂົ້າຮ່ວມກອງປະຊຸມ ແຕ່ລະຄັ້ງ;
3. ຊີ້ນຳການປະຕິບັດໜ້າທີ່ ຂອງກອງເລຂາ ເພື່ອປະຕິບັດວຽກງານ;
4. ໄດ້ຮັບການລາຍງານວຽກງານປະຈຳເດືອນເປັນປົກກະຕິ.

ມາດຕາ 29 ກອງປະຊຸມຄະນະກຳມະການຄຸ້ມຄອງ "ກສຍ"
ແຕ່ລະຂັ້ນ ປະກອບມີດັ່ງນີ້

1. ກອງປະຊຸມສາມັນ "ກສຍ" ເປີດຂຶ້ນຢ່າງໜ້ອຍ ໜຶ່ງຄັ້ງຕໍ່ປີ, ໂດຍມີ ຄະນະກຳມະການຄຸ້ມຄອງ"ກສຍ" ຫຼາຍກ່ວາ 2/3 ຂອງຈຳນວນທັງໝົດ, ມີຕາງໜ້າກຸ່ມ ຜູ້ປະກອບສ່ວນທຶນ ເຂົ້າຮ່ວມ ຕາມການເຊື້ອເຊີນ ເພື່ອຮັບຟັງ ການສະຫຼຸບການເຄື່ອນໄຫວຽກງານ"ກສຍ" ແລະ ຮັບຮອງທິດທາງ, ແຜນການເຄື່ອນໄຫວຕໍ່ໜ້າ;
2. ກອງປະຊຸມຄະນະກຳມະການຄຸ້ມຄອງ "ກສຍ"ຈະເປີດຂຶ້ນໄດ້ ກໍ່ຕໍ່ເມື່ອມີຜູ້ເຂົ້າຮ່ວມຢ່າງໜ້ອຍ 2/3 ຂອງຈຳນວນ ກຳມະການທັງໝົດ; ເພື່ອພິຈາລະນາຕົກລົງ ການຄ້ຳປະກັນ, ການກຳນົດອັດຕາດອກເບ້ຍປ່ອຍກູ້ແຕ່ລະປີ, ການໃຫ້ກູ້ຢືມ ແລະ ການຊ່ວຍເຫຼືອສຸກເສີນ ແລະ ບັນຫາ ທີ່ບໍ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
3. ກອງປະຊຸມວິສາມັນ "ກສຍ" ເປີດຂຶ້ນເວລາໃດກໍ່ໄດ້ ຕາມຄວາມຈຳເປັນ ໂດຍມີຄະນະກຳມະການຄຸ້ມຄອງ "ກສຍ" ຫຼາຍກ່ວາ 2/3 ຂອງຈຳນວນທັງໝົດ, ມີຊາວກະສິກອນ, ກຸ່ມຜູ້ຜະລິດ, ຜູ້ປະກອບສ່ວນທຶນ ຕາມການເຊື້ອເຊີນ ເຂົ້າຮ່ວມ ເພື່ອແກ້ໄຂບັນຫາວຽກງານອັນຮີບດ່ວນ;
4. ມະຕິກອງປະຊຸມ ຈະມີຄຸນຄ່າໄດ້ ກໍ່ຕໍ່ເມື່ອໄດ້ຮັບຄະແນນສຽງ ສ່ວນຫຼາຍ ຂອງຄະນະກຳມະການ ທີ່ເຂົ້າຮ່ວມປະຊຸມ.

ມາດຕາ 30 ການລາຍງານ.

ກອງເລຂາ "ກສຍ" ແຕ່ລະຂັ້ນ ລາຍງານ ກ່ຽວກັບການເຄື່ອນໄຫວ ໃນການຈັດຕັ້ງປະຕິບັດວຽກງານ "ກສຍ" ຮອບດ້ານ ຕໍ່ຄະນະກຳມະການຄຸ້ມຄອງ"ກສຍ" ແລະ ພາກສ່ວນທີ່ກ່ຽວຂ້ອງຮັບຊາບໃນ ແຕ່ລະເດືອນ, 3ເດືອນ, 6ເດືອນ ແລະ ປີ.

ໝວດ ທີ 5
ລະບົບການກວດກາ

ມາດຕາ 31 ການກວດກາ "ກສກ" ປະກອບດ້ວຍ

1. ການກວດກາພາຍໃນ ແມ່ນຄະນະກຳມະການຄຸ້ມຄອງ "ກສຍ" ເປັນຜູ້ດຳເນີນການກວດກາ;
2. ການກວດກາພາຍນອກ ແມ່ນ ອົງການກວດສອບແຫ່ງລັດ ຫຼື ອົງການກວດກາທີ່ໄດ້ຮັບມອບໝາຍ ເປັນຜູ້ດຳເນີນການ.

ມາດຕາ 32 ເປົ້າໝາຍການກວດກາ ມີດັ່ງນີ້

1. ການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້, ລະບຽບການ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;
2. ການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ການສ້າງ ແລະ ປະຕິບັດແຜນການເຄື່ອນໄຫວ, ແຜນກິດຈະກຳ;
4. ການນຳໃຊ້ງົບປະມານກອງທຶນຕ້ອງມີລະບຽບການ;
5. ກວດກາການເກັບເງິນເຂົ້າ "ກສຍ".

ມາດຕາ 33 ຮູບແບບການກວດກາ.

ການກວດວຽກງານ "ກສຍ" ມີ 3 ຮູບແບບ ດັ່ງນີ້

1. ການກວດກາຢ່າງເປັນລະບົບປົກກະຕິ ແມ່ນ ການກກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນ ປະຈຳ ແລະ ມີກຳນົດເວລາຢ່າງແນ່ນອນ;
2. ການກວດກາ ໂດຍມີການແຈ້ງລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າ ມີຄວາມ ຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;
3. ການກວດກາແບບກະທັນຫັນ ແມ່ນການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບ ລ່ວງໜ້າ;

ໃນການດຳເນີນການກວດກາ ວຽກງານ"ກສຍ" ເຈົ້າໜ້າທີ່ກວດກາ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມ ລະບຽບກົດໝາຍ.

ໝວດທີ 6
ຂໍ້ຫ້າມ

ມາດຕາ 34 ຂໍ້ຫ້າມຕໍ່ຄະນະກຳມະການຄຸ້ມຄອງ"ກສຍ" ແລະ ກອງເລຂາ, ຫ້ອງການທີ່ເຮັດວຽກງານ"ກສຍ"

1. ຫ້າມໂຄສະນາຊວນເຊື່ອອັນທີ່ກໍ່ໃຫ້ເກີດຄວາມບໍ່ເຂົ້າໃຈ ຕໍ່ການປະກອບສ່ວນ ເຂົ້າ"ກສຍ";
2. ຫ້າມ ປະລະ, ເມີນເສີຍຕໍ່ໜ້າທີ່;
3. ຫ້າມປອມແປງເອກະສານຕ່າງໆ ເປັນຕົ້ນແມ່ນໃບຄິດໄລ່, ໃບຮັບເງິນ;
4. ຫ້າມເລືອກປະຕິບັດ ຕໍ່ບັນດາຜູ້ມີສ່ວນຮ່ວມ ການຈັດຕັ້ງປະຕິບັດວຽກງານ"ກສຍ";
5. ຫ້າມຮັກສາ, ຈ່າຍເງິນ"ກສຍ" ທີ່ບໍ່ໄດ້ຮັບການອານຸມັດ ຈາກ ປະທານຄະນະກຳມະການຄຸ້ມຄອງ;
6. ຫ້າມເກັບເງິນຊ້ຳຊ້ອນ ແລະ ເກັບເງິນເກີນອັດຕາກຳນົດ;
7. ຫ້າມປ່ອຍເງິນກູ້ທີ່ບໍ່ຖືກເປົ້າໝາຍ;
8. ຫ້າມນຳໃຊ້ເງິນທີ່ໄດ້ຈາກແຫຼ່ງລາຍຮັບ ທີ່ກຳນົດໄວ້ ໃນມາດຕາ 7 ຂໍ້ 4, ຂໍ້ 5 ແລະ ຂໍ້ 6 ເຂົ້າໃນ ວຽກງານບໍລິຫານ.

ມາດຕາ 35 ຂໍ້ຫ້າມຕໍ່ ບັນດາຫົວໜ່ວຍທຸລະກິດ ສົ່ງເສີມ ເກັບຊື້, ກຸ່ມການຜະລິດ ແລະ ປະຊາຊົນ

1. ຫ້າມໂຄສະນາຊວນເຊື່ອ ອັນທີ່ກໍ່ໃຫ້ເກີດຄວາມບໍ່ເຂົ້າໃຈ ຕໍ່ການປະກອບສ່ວນເຂົ້າ"ກສຍ";
2. ຫ້າມລະເວັ້ນ, ຫຼີກລ້ຽງ ການປະກອບສ່ວນເຂົ້າໃນ "ກສຍ";
3. ຫ້າມໃຫ້ວັດຖຸ, ເງິນ ແກ່ຄະນະກຳມະການຄຸ້ມຄອງ, ກອງເລຂາ, ຫ້ອງການ ທີ່ເຮັດວຽກກ່ຽວຂ້ອງກັບ "ກສຍ" ເພື່ອເຮັດໃຫ້ຕົນເອງມີສ່ວນໄດ້ຜົນປະໂຫຍດ;
4. ຫ້າມນຳໃຊ້ທຶນ ໄປນອກເປົ້າໝາຍທີ່ກູ້ຢືມ.

ໝວດທີ 7

ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 36 ນະໂຍບາຍຕໍ່ຜູ້ມີຜົນງານ

ອົງການຈັດຕັ້ງລັດ, ອົງການຈັດຕັ້ງສັງຄົມອື່ນໆ ທີ່ໄດ້ປະກອບສ່ວນເຂົ້າວຽກງານ "ກສຍ" ເຮັດໃຫ້ມີຜົນສຳເລັດ, ຊາວກະສິກອນ, ກຸ່ມການຜະລິດ, ສະຫະກອນ, ສະມາຄົມ ແລະ ນັກທຸລະກິດ ຜູ້ປະກອບການດ້ານກະສິກຳ ທີ່ປະກອບສ່ວນເງິນ ເຂົ້າກອງທຶນເປັນປົກກະຕິ, ນອກຈາກໄດ້ຮັບນະໂຍບາຍ ຕາມທີ່ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ຍັງຈະໄດ້ຮັບການຍ້ອງຍໍ ສັນລະເສີນ ຕາມລະບອບນະໂຍບາຍຍ້ອງຍໍຂອງລັດ, ໂດຍແມ່ນກອງເລຂາເປັນຜູ້ກະກຽມສະເໜີຜ່ານກອງປະຊຸມປະຈຳປີ.

ມາດຕາ 37 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ, ຊາວກະສິກອນ, ກຸ່ມການຜະລິດ, ສະຫະກອນ, ສະມາຄົມ ແລະ ນັກທຸລະກິດ ຜູ້ປະກອບການ ດ້ານກະສິກຳ ອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສັງຄົມອື່ນໆ ທີ່ລະເວັ້ນ ແລະ ບໍ່ປະຕິບັດພາລະບົດບາດຂອງຕົນ ຫຼື ມີການຫຼີກລ້ຽງ ທາງກົງ ແລະ ທາງອອ້ມ ເຮັດໃຫ້ມີຜົນເສຍຫາຍ ຕໍ່ວຽກງານ "ກສຍ" ແມ່ນຈະຖືກຕັກເຕືອນ, ຖືກມາດຕະການ ຕໍ່ການດຳເນີນທຸລະກິດ ແລະ ຖືກດຳເນີນຄະດີຕາມກົດໝາຍຂອງ ສ ປ ປ ລາວ ຕາມສະຖານເບົາ ຫຼື ໜັກ.

ໝວດທີ 8.

ບົດບັນຍັດສຸດທ້າຍ

ມາດຕາ 38 ການຈັດຕັ້ງປະຕິບັດ

ຄະນະກຳມະການຄຸ້ມຄອງ "ກສຍ" ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ພາຍໃນແຂວງ ເພື່ອຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້, ພ້ອມທັງລາຍງານ ສະພາບການເຄື່ອນໄຫວຮອບດ້ານ ເປັນລາຍລັກອັກສອນ ຕໍ່ການຈັດຕັ້ງ ທີ່ກ່ຽວຂ້ອງພາຍໃນແຂວງ ທຸກໆ 3 ເດືອນ.

ບັນດາພະແນການ ອົງການຈັດຕັ້ງພາກລັດ, ອົງການປົກຄອງທຸກຂັ້ນ, ຊາວກະສິກອນ, ກຸ່ມການຜະລິດ, ສະຫະກອນ, ສະມາຄົມ ແລະ ນັກທຸລະກິດ ຜູ້ປະກອບການ ດ້ານກະສິກຳ, ການຈັດຕັ້ງພາກເອກະຊົນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 39 ຜົນສັກສິດ

ຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ ໃດ ຂອງຂັ້ນແຂວງ, ເມືອງ ທີ່ມີເນື້ອໃນຂັດກັບເນື້ອໃນຂອງຂໍ້ຕົກລົງສະບັບນີ້ ແມ່ນໃຫ້ລົບລ້າງ. ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການສິບຫ້າວັນ.

ເຈົ້າແຂວງ

ແຂວງໄຊຍະບູລີ
ເຈົ້າແຂວງ

ພົງສະຫວັນ ສິດທະວົງ